**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---oo---

**ນາຍົກລັດຖະມົນຕີ**

ເລກທີ 199 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 12.04.2012.

ກະຊວງໂຍທາທິການ ແລະ ຂົນສົ່ງ
ເລກທີ 639.2
ລົງ ວັນທີ 20.4.12

## ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຍຸດທະສາດ ວຽກງານແມ່ ແລະ ເດັກ 2011-2015, ແຜນດຳເນີນງານແຫ່ງຊາດ ວຽກງານ ແມ່ ແລະ ເດັກ 2011-2015

- ອີງຕາມໝວດທີ IV, ມາດຕາ 12 ຂອງກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມແຈ້ງການ ສະບັບເລກທີ 970/ຫລບ, ລົງວັນທີ 13 ທັນວາ 2011 ຂອງຫ້ອງວ່າການລັດຖະບານ.
- ອີງຕາມໜັງສືສະເໜີ ສະບັບເລກທີ 42/ຫລບ.ຄມດຊ, ລົງວັນທີ 14 ມີນາ 2012 ຂອງຄະນະກຳມາທິການ ເພື່ອແມ່ ແລະ ເດັກ ແຫ່ງຊາດ.

**ນາຍົກລັດຖະມົນຕີ ອອກດຳລັດ :**

**ມາດຕາ 1.** ຮັບຮອງ ແລະ ປະກາດໃຊ້ ແຜນຍຸດທະສາດວຽກງານແມ່ ແລະເດັກ ແຫ່ງຊາດ 2011-2015, ແຜນດຳເນີນງານ ແຫ່ງຊາດ ວຽກງານແມ່ ແລະ ເດັກ 2011-2015.

**ມາດຕາ 2.** ມອບໃຫ້ຄະນະກຳມາທິການ ເພື່ອແມ່ ແລະ ເດັກ ແຫ່ງຊາດ ເປັນເຈົ້າການປະສານສົມທົບກັບຄະນະແມ່ ແລະ ເດັກ ຂອງບັນດາກະຊວງ, ອົງການທຽບເທົ່າກະຊວງ, ບັນດາແຂວງ, ນະຄອນຫລວງວຽງຈັນ ແລະ ພາກສ່ວນອື່ນໆ ຄົ້ນຄ້ວາຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດ ແລະ ແຜນດຳເນີນງານແຫ່ງຊາດດັ່ງກ່າວ ໃຫ້ປະກົດຜົນເປັນຈິງ.

**ມາດຕາ 3.** ບັນດາກະຊວງ, ອົງການທຽບເທົ່າກະຊວງ, ບັນດາແຂວງ, ນະຄອນຫລວງວຽງຈັນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 4.** ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ນາຍົກລັດຖະມົນຕີ

**ທອງສິງ ທຳມະວົງ**